

# ແຕ່ເກີດຈົນຮອດຫົກປີ

## ການເຕີບໃຫຍ່ & ການວິວັດທະນາການ

ກະຣຸນາ ຖາມ

ທາຣົກ ຖ້າບໍ່ໄດ້

### ແມ່ນຫຍັງ

ຕາຕະລາງແມ່ນຂຽນຂື້ນສຳລັບພໍ່ແມ່ທັງຫລາຍ, ແຕ່ຜູ້ໃດທີ່ຮູ້ ແລະ ເຮັດວຽກກັບເດັກນ້ອຍກໍຈະເຫັນວ່າມັນມີປະໂຍດ.

### ເປັນຫຍັງ

ຕາຕະລາງການກວດເບິ່ງກ່ອນເປັນວິທີທີ່ໄວເພື່ອຊ່ວຍໃຫ້ທ່ານຮູ້ເຖີງວ່າອາດມີບັນຫາຢູ່ນຳການເບິ່ງ, ການຮູ້ຍິນ, ແລະ ການວິວັດທະນາການຂອງເດັກຂອງທ່ານ. ຕາຕະລາງຈະຊ່ວຍໃຫ້ທ່ານເບິ່ງເດັກໄດ້ທັງຕົວ. ທ່ານຈະສັງເກດເບິ່ງການພັທນາການຂອງເດັກໃນດ້ານແນວຄິດ, ຄວາມຊຳນານດ້ານສັງຄົມ, ການຟັງ, ການເວົ້າ ແລະ ການກະທຳການເຄື່ອນໃຫວ.ໃຊ້ກ້າມເນື້ອສ່ວນນ້ອຍ (ເຊັ່ນວ່ານີ້ວມື), ຢ່າງອື່ນໃຊ້ກ້າມເນື້ອໃຫຍ່ (ເຊັ່ນວ່າຂາ) ມັນເປັນສີ່ງສຳຄັນທີ່ຕ້ອງໄດ້ສັງເກດເບິ່ງການເບິ່ງ ແລະ ການໄດ້ຍິນຂອງເດັກທຸກໄວ.ສຳຄັນ: ຕາຕລາງນີ້ແມ່ນວິທີທີ່ໃວເພື່ອຊ່ອຍໃຫ້ທ່ານຕິດຕາມເບິ່ງການເບິ່ງ,ການໄດ້ຍິນ, ແລະການຈະເຣີນເຕີບຂອງເດັກຂອງທ່ານ ແລະ ບໍ່ໄດ້ແມ່ໃສ່ໃຫ້ເປັນການທົດສອບການພັທນາການ, ການປະເມີນ ຫລືການຕີຣາຄາ.

### ເຮັດຢ່າງໃດ

ໃນແຕ່ລະໝວດອາຍຸໄດ້ຂຽນກິຈກັມຊຶ່ງເດັກສ່ວນຫລາຍຈະສາມາດເຮັດໄດ້ໃນເວລາໃດເວລານື່ງຣະຫວ່າງປີທຳອິດ ແລະ ປີທີ່ສອງຢູ່ໃນໝວດນັ້ນ. ຕົວຢ່າງ, ຮອດສິບສອງເດືອນເດັກສ່ວນຫລາຍຈະສາມາດເຮັດທຸກກິຈກັມທີ່ຂຽນໄວ້ໃນໝວດຫົກຫາສິບສອງເດືອນ.ເຖີງຢ່າງໃດກໍດີ, ເດັກຫົກເດືອນສ່ວນຫລາຍຈະບໍ່ສາມາດເຮັດກິຈກັມເຫລົ່ານີ້ໄດ້ໝົດ.ສີ່ງຄືກັນນີ້ກໍເປັນຄວາມຈິງສຳລັບອາຍຸແຕ່ລະໝວດ. ສນັ້ນ, ຢ່າໄດ້ກັງວົນເກີນໄປຖ້າເດັກຂອງທ່ານຢູ່ໃນຂັ້ນເລີ່ມຕົ້ນຂອງຣະດັບອາຍຸບໍ່ສາມາດເຮັດກິຈກັມໄດ້ທັງໝົດ.ຍ້ອນວ່າເດັກພັທນາໄປຕາມອັດຕຣາຕ່າງກັນ, ບໍ່ຕ້ອງຢ້ານພຽງແຕ່ວ່າເດັກປາກົດວ່າຊັກຊ້າຕໍ່ວຽກນຶ່ງເທົ່າກັນ.

ໃຫ້ອ່ານກິຈກັມທີ່ຂຽນໄວ້ກ້ອງອາຍຸຂອງເດັກ ແລະ ກ້ອງການເບິ່ງ ແລະ ການໄດ້ຍິນ. ໃຫ້ເບິ່ງ ແລະ ຟັງເວລາເດັກຫລິ້ນ. ເດັກເຮັດກິຈກັມນັ້ນໄດ້ບໍ່? ສີ່ງສຳຄັນກໍແມ່ນວ່າໃຫ້ເດັກມີເວລາ, ບ່ອນ ແລະ ວັດທຸທີ່ຕ້ອງການສຳລັບແຕ່ລະກິຈກັມ. ຕົວຢ່າງ, ຢ່າເວົ້າວ່າເດັກບໍ່ສາມາດແຕ້ມຮູບໜ້າໄດ້ ຖ້າທ່ານບໍ່ເອົາເຈັ້ຽ ແລະ ສໍ ຫລື ສໍສີໃຫ້ເດັກ.

ທ່ານອາດໄດ້ຊີ່ງຊອມເບິ່ງ ແລະ ຟັງເດັກຫລາຍໆມື້, ໃຊ້ຕາຕະລາງນັ້ນຈົດຄວາມກັງວົນໃດໆທີ່ທ່ານມີ. ຖ້າເດັກຢູ່ໃນຣະດັບອາຍຸສູງຂອງໝວດນື່ງບໍ່ສາມາດເຮັດກິຈກັມໄດ້ໝົດຄອບຄົວຄວນເວົ້າຂໍ້ສັງເກດຂອງເຂົາເຈົ້າໃຫ້ນັກອາຊີບຜູ້ທີ່ສາມາດເບິ່ງການພັທນາຂອງເດັກຢ່າງໄກ້ກວ່ານັ້ນຟັງ.

### ເວລາໃດ

ສັງເກດເບິ່ງ ແລະ ຟັງເດັກເວລາຫລິ້ນ. ທ່ານຊີ່ງຊອມເບິ່ງສີ່ງທີ່ເດັກມັກຕາມປົກະຕິ. ຢ່າໃຊ້ຕາຕະລາງນີ້ເວາລເດັກບໍ່ສະບາຍ, ເມື່ອຍ ຫລື ໃຈຮ້າຍ.

### ຕໍ່ໄປເຮັດຫຍັງ

ທ່ານສາມາດໂທຫາແມ່ທີ່ມີສຸຂພາບສົມບູນ/ແຂນ້ອຍສຸຂພາບສົມບູນ ເລກໂທທີ່ຂຽນໄວ້ຢູ່ລຸ່ມນີ້ເພື່ອເອົາຊື່ຂອງຜູ້ກຳກັບການ ແລະ ບ່ອນຊ່ວຍເຫລືອຄອບຄົວ (FRC) ໃນເຂດຂອງທ່ານຖ້າທ່ານມີຄວາມກັງວົນກ່ຽວກັບການພັທການຂອງເດັກທ່ານ. ທ່ານໝໍຂອງເດັກ, ກົມສຸຂພາບ ຫລື ເຂດໂຮງຮຽນກໍຍັງສາມາດຊ່ວຍຄອບຄົວ ແລະ ທ່ານຊອກຫາອົງການໃກ້ຄຽງຊຶ່ງສາມາດເຮັດການກວດກາການພັທນາການ, ການເບິ່ງ ແລະ/ການໄດ້ຍິນຂອງເດັກລະອຽດກວ່າ.

### ການເຫັນ: ລູກຂອງທ່ານເຮັດບໍ່...

- ☐ ເຮັດການຕິດຕໍ່ທາງຕາ (ເບິ່ງຕາຂອງເຈົ້າ)
- ☐ ຕິດຕາມສີ່ງທີ່ຍົກຍ້າຍກັບຕາຂອງລາວ
- ☐ ຍ່າງ ຫລື ຄານໂດຍບໍ່ປະທະກັບສີ່ງຂອງສເມີໄປ
- ☐ ເບິ່ງຄົນ ແລະ ສີ່ງຂອງຕ່າງໆໂດຍໃຊ້ຕາທັງສອງເບື້ອງ
- ☐ ຖືຈັບສີ່ງຂອງເປັນລະຍະທຳມະດາ (ຫລັງຈາກ ອາຍຸ 6 ເດືອນ)
- ☐ ຍ່າງ ຫລື ຄານຂ້າມເງົາໄດ້ເປັນຢ່າງດີ ຫລື ຂອບເຂດບ່ອນທີ່ເບິ່ງແຕກຕ່າງກັນ (ຜ້າພົມ, ພື້ນປູດ້ວຍດິນ)
- ☐ ເບິ່ງຄົນ ແລະ ສີ່ງຂອງໂດຍບໍ່ຕ້ອງເຫລືອກ ຕາຜ່ານ ຫລື ຫລີວຕາ (ຫລັງຈາກ 9 ເດືອນ)
- ☐ ມີຕາທີ່ຈະແຈ້ງ, ບໍ່ມີສີແດງ ຫລື ນ້ຳຕາ

### ການຮູ້ຍິນ: ລູກຂອງທ່ານເຮັດບໍ່...

- ☐ ບອກໃຫ້ຮູ້ຈັກວ່າເຮືອນມີສຽງດັງ (ໂທຣະສັບ, ເຄາະປະຕູ, ໂທຣະທັດ)
- ☐ ໃຊ້ສຽງທີ່ບໍ່ດັງແຮງຄ່ອຍເກີນໄປ
- ☐ ຫລັ້ນກັບເຄື່ອງຫລີ້ນທີ່ເຮັດມີສຽງດັງ (ສຽງແຫລມ, ສຽງຣະຄັງ)
- ☐ ຮຽນແບບສຽງ (ຫລັງຈາກ 1 ປີ)
- ☐ ໃຊ້ບາງຄຳທີ່ສຸດທ້າຍລົງ (“S” ຫລື “ing”) ຫລັງຈາກອາຍຸສອງປີ
- ☐ ເຮັດຕາມຄຳແນະນຳປາກເປົ່າ
- ☐ ບິດ ໂທຣະທັດ ຫລື ວິທະຍຸ ໃຫ້ມີສຽງພໍສົມມາສົມຄວນ
- ☐ ຟັງເຣື້ອງ, ບັນທຶກ, ຫລື ທາງ ໂທຣະທັດໂດຍບໍ່ມີບັນຫາ
- ☐ ເວົ້າໃຫ້ຄົນທັງຫລາຍສາມາດເຂົ້າໃຈ (ຖ້າໃຫຍ່ກວ່າສອງປີເຄິ່ງ 2 1/2 ປີ)
- ☐ ມາຫາເຈົ້າເວລາເຈົ້າຮ້ອງຈາກຫ້ອງອື່ນ (ຫລັງຈາກ 2 ປີ)

*Funding by the Department of Early Learning*

Washington State Department of Early Learning

ບ່ອນຢູ່ເວບໄຊສ໌ຂອງພວກຂ້າພະເຈົ້າແມ່ນ:
www.del.wa.gov/esit

DEL 11-002 LA (02/11)

Early Support for Infants and Toddlers

Family Health Hotline
1.800.322.2588
711 (tty relay) • withinreachwa.org

a program of WithinReach

# ແຕ່ເກີດຈົນຮອດຫົກປີ

## ການເຕີບໃຫຍ່ & ການວິວັດທະນາການ



**ສຳລັບພໍ່ແມ່:** ໃນຖານະເປັນພໍ່ແມ່, ທ່ານເປັນຜູ້ທີ່ສຳຄັນທີ່ສຸດໃນຊີວິດລູກຂອງທ່ານ. ທ່ານຮູ້ລູກຂອງທ່ານດີທີ່ສຸດ. ຖ້າທ່ານມີຂໍ້ຂ້ອງໃຈກ່ຽວກັບການຈເຣີນເຕີບໂຕຂອງລູກທ່ານອາດສາມາດຂໍຮ້ອງການຕີຣາຄາ. ກະຣຸນາຖາມອີກດ້ວຍຖ້າທ່ານຫາກມີຄຳຖາມ ຫລື ຂໍ້ຂ້ອງໃຈຕ່າງໆ. ໃຫ້ໂທຫາໂຄງການແມ່ ແລະ ເດັກທີ່ສົມບູນໃນເລກໂທ 1-800-322-2588 ເພື່ອຖາມເຖິງຊື່ຂອງແຫລ່ງຊ່ວຍເຫລືອຄອບຄົວ. ຜູ້ກຳກັບການ (FRC) ຈະເປັນຜູ້ສາມາດຊ່ວຍເຫລືອທ່ານ



**ສຳລັບຜູ້ໃຫ້ການປິ່ນປົວ:** ເດັກໃຫຍ່ ແລະ ຈເຣີນເຕີບໂຕຫລາຍທາງແຕກຕ່າງກັນ.ກະຣຸນາພະຍາຍາມ ແລະ ລົມຄອບຄົວກ່ຽວກັບການຈເຣີນເຕີບໂຕຂອງລູກເຂົາເຈົ້າໂດຍປົກກະຕິ. ໃຫ້ຖາມເຂົາກ່ຽວກັບເຣື່ອງຄວາມຊຳນານແນວໃໝ່ທີ່ລູກຂອງເຂົາເຈົ້າໄດ້ຮຽນຮູ້, ສິ່ງໃດທີ່ເປັນຂໍ້ຂ້ອງໃຈຊຶ່ງອາດຈະມີພ້ອມທັງການແລກປ່ຽນຄຳເຫັນຜ່ານການສັງເກດຂອງທ່ານເອງ. ບອກຄອບຄົວໃຫ້ຮູ້ອີກວ່າຖ້າເຂົາເຈົ້າມີຂໍ້ຂ້ອງໃຈຕ່າງໆກໍຍັງມີຂ່າວ ແລະ ການຊ່ວຍເຫລືອໄວ້ບໍຣິການໂດຍໃຫ້ໂທຫາໂຄງການສຸຂພາບແມ່ ແລະ ເດັກ (HM/HB) ເຂົາເຈົ້າຈະຊ່ວຍນຳສົ່ງຄອບຄົວໄປຫາສູນແຫລ່ງຊ່ວຍເຫລືອຄອບຄົວ (FRC)ຢູ່ໃນເຂດຂອງເຂົາເຈົ້າ. ທ}ານຍັງສາມາດໂທຫາ (HM/HB) ສຳລັບຊື່ ແລະ ເລກໂທຣະສັບຂອງ (FRC) ແລະ ໃຫ້ຣາຍລະອຽດຂ່າວກັບຄອບຄົວໂດຍກົງ.

### ແຕ່ເກີດມາຮອດ 3 ເດືອນ ລູກຂອງທ່ານ...

- ☐ ເງີຍຫົວຂອງລາວ ແລະ ໜ້າເອິກເວລາເໝບໜ້າທ້ອງຂອງລາວ
- ☐ ຍົກຍ້າຍແຂນ ແລະ ຂາຂອງລາວງ່າຍ
- ☐ ເຮັດຕາມການຍົກຍ້າຍຂອງເຈົ້າໂດຍການປິ່ນຫົວຂອງລາວໄປທາງຂ້າງຕໍ່ຂ້າງ
- ☐ ກິນເຕົ້ານົມ ຫລື ນົມງ່າຍ ແລະ ດູດກິນສະບາຍ
- ☐ ຕົກໃຈ ຫລື ຮ້ອງໃຫ້ເປັນສຽງແຮງທັນທີ
- ☐ ເບິ່ງເຈົ້າ, ເບິ່ງໜ້າເຈົ້າ
- ☐ ເຮັດສຽງອອກມາໂອອາໆ ຫລື ເບົ່າໆ
- ☐ ຍີ້ມຕອບໃນການຫົວ ຫລື ຄຳເວົ້າຂອງເຈົ້າ
- ☐ ງຽບງ່າຍເວລາຖືກປອບໃຈ

### 3 ຫາ 6 ເດືອນ ລູກຂອງທ່ານ...

- ☐ ລາວຫລິ້ນຕີນຂອງລາວເວລາລາວນອນທາງຫລັງ
- ☐ ເວລາລາວນອນເໝບທາງທ້ອງລາວເງີຍຫົວ ແລະ ໜ້າອົກກັບນ້ຳໜັກໃນມືຂອງລາວ
- ☐ ເງີຍຫົວຂອງລາວຂຶ້ນໄປທາງຂວາ ແລະ ຮຽນໂດຍບໍ່ຕ້ອງການຊ່ວຍເຫລືອ
- ☐ ປິ້ນໄປມາຈາກທ້ອງຫາຫລັງ ແລະ ຫລັງຫາທ້ອງ
- ☐ ຫລີ້ນດ້ວຍມືຂອງລາວເອງໂດຍການແຕະຕ້ອງມັນນຳກັນ
- ☐ ຍື້ເອົາຂອງຫລິ້ນ
- ☐ ຈັບເອົາຂອງຫລິ້ນຣະຫວ່າງບ່ອນຍື້ເອົາ
- ☐ ງວກຫົວຂອງລາວໄປຫາທາງມີສຽງດັງ
- ☐ ເຮັດສຽງດັງທີ່ແຕກຕ່າງກັນ
- ☐ ຫົວເປັນສຽງແຮງໆ
- ☐ ເລີ່ມບອກວ່າມັກ ແລະ ບໍ່ມັກ

### 6 ຫາ 12 ເດືອນ ລູກຂອງທ່ານ...

- ☐ ດຶງຕົວເອງເພື່ອຢືນຂຶ້ນກັບຊ່ວຍເຫລືອບາງເທື່ອ
- ☐ ນັ່ງໂດຍບໍ່ຕ້ອງໃຫ້ຊ່ວຍຂນະນັ່ງຫລິ້ນກັບເຄື່ອງຫລິ້ນ
- ☐ ສົ່ງສິ່ງຂອງຈາກມືນຶ່ງໄປບ່ອນອື່ນ
- ☐ ອົມນີ້ວຕີນຂອງຕົນເອງ
- ☐ ຮຽນແບບຍົກມືລາກ່ອນໆ
- ☐ ບອກໃຫ້ເຈົ້າຮູ້ວ່າລາວຕ້ອງການກັບການເໜັງຕີງ ແລະ ສຽງ
- ☐ ເວົ້ານຳສຽງ (ບາ-ບາ/ກາ-ກາ)
- ☐ ເຮັດປິ່ນໄປຂນະຫລິ້ນກັບຜູ້ໃຫຍ່ (ລັກສະນະການເຮັດ, ສຽງ ຫລື ການບອກທາງຮ່າງກາຍ)
- ☐ ບອກໃຫ້ເຈົ້າຮູ້ວ່າ ລາວເຂົ້າໃຈຄຳຖາມງ່າຍໆ (ເຈົ້າຢາກໄດ້ຕື່ມບໍ່?)
- ☐ ຮູ້ຈັກພໍ່ແມ່ຈາກຄົນແປກໜ້າ

### 12 ຫາ 18 ເດືອນ ລູກຂອງທ່ານ...

- ☐ ຍ່າງໄດ້ເອງ
- ☐ ເກັບເອົາສິ່ງຂອງນ້ອຍໆ (ແກ່ນໝາກອາງຸ່ນ)
- ☐ ເອົາສິ່ງຂອງເຂົ້າໃສ່ ແລະ ຖິ້ມເຂົ້າໃສ່ແອບໃສ່ຂອງ
- ☐ ເອົາສິ່ງນຶ່ງໃສ່ເທິງອັນອື່ນ
- ☐ ປ້ອນຕົນເອງກັບບ່ວງ
- ☐ ເວົ້າສອງ ຫລື ສາມຄຳຕ່າງກັນເພີ່ມເຂົ້າ ມາມາ ຫລື ດາດາ
- ☐ ຖາມຫາສິ່ງຂອງທີ່ໃຊ້ຄຳເວົ້າ
- ☐ ຈັບຖື ແລະ ດື່ມດ້ວຍຈອກກັບເຫັ່ຽລົງບາງຢ່າງ
- ☐ ຊີ້ໃສ່ສິ່ງຂອງຫລາຍຢ່າງ ຫລື ຮູບເວລາບອກຊື່

### 18 ຫາ 2 ປີ ລູກຂອງທ່ານ...

- ☐ ຍ່າງຂຶ້ນ ແລະ ລົງຂັ້ນໃດດ້ວຍມືຂອງລາວກັບບ່ອນຈັບ
- ☐ ຂີດຂຽນ
- ☐ ເໜັ່ງຕີງຮ່າງກາຍເຂົ້າກັບສຽງເພັງ
- ☐ ເອົາສອງຄຳເວົ້າເຂົ້າກັນ (ເອົານ້ຳຫວານຕື່ມ)
- ☐ ເລີ່ມຕົ້ນຖາມຄຳຖາມ, ນ້ຳຫວານ?ບາຍ-ບາຍ?
- ☐ ກິນ ແຊນວິສ ດ້ວຍຕົນເອງ, ກັດເປັນຄຳ
- ☐ ແກ້ຖົງຕີນ ແລະ ເກີບ
- ☐ ເບິ່ງປຶ້ມເຣື້ອງມີຮູບກັບຜູ້ໃຫຍ່
- ☐ ເຮັດການເລືອກຂອງຫລິ້ນບາງຢ່າງ (ເຮັດໃຫ້ສົມລະວົນ ຫລືຣົດທຣັກ)
- ☐ ຮຽນແບບການຫລິ້ນຂອງລູກຜູ້ອື່ນ (ເທດິນຊາຍ, ແກ່ວງບານ)

### 2 ຫາ 3 ປີ ລູກຂອງທ່ານ...

- ☐ ຍ່າງ, ແລ່ນ, ຢຸດ, ກ້າວຂຶ້ນ ແລະ ລົງໄດ້ດີ
- ☐ ເອົາວັດຖຸ 3 ອັນ ຫລື ຫລາຍກວ່າປ່ອງກັນຂຶ້ນ
- ☐ ໃຊ້ບ່ວງ ແລະ ຈອກທຸກຢ່າງດ້ວຍຕົນເອງ
- ☐ ເຮັດຕາມການແນະນຳໄປສອງຂັ້ນ (ເອົາປຶ້ມ ແລະ ເອົາມັນໄວ້ເທິງໂຕະ.)
- ☐ ບອກຊື່ສ່ວນຂອງຮ່າງກາຍໄດ້ຫ້າ ຫາ ຫົກຢ່າງດ້ວຍຕົນເອງ
- ☐ ເຮັດພາກສ່ວນຕົວຢ່າງໃນການເວົ້ານຳກັນ
- ☐ ຕົວຢ່າງຕອບ ແມ່ນຫຍັງ ແລະ ເຮັດຫຍັງ ຖາມ (ເຈົ້າຕ້ອງການກິນເຂົ້າຕອນບ່າຍຢ່າງໃດ?)
- ☐ ຊີ້ ຫລື ບອກຊື່ສິ່ງຂອງເວລາບອກໃຫ້ໃຊ້ (ເຈົ້າດື່ມກັບຫຍັງ?)
- ☐ ຊ່ວຍເຮັດວຽກງ່າຍໆບາງຢ່າງ (ເກັບມ້ຽນຂອງຫລິ້ນ)
- ☐ ໃຊ້ສອງສາມຄຳເປັນປໂຍກທຳມະດາ

### 3 ຫາ 4 ປີ ລູກຂອງທ່ານ...

- ☐ ເຕັ້ນ, ແລ່ນ, ແກວ່ງ, ປີນ, ໃຊ້ການທຸມທ່ຽງເປັນຢ່າງດີ
- ☐ ແຕ້ມຮູບວົງວົນ, ເສັ້ນຊື່ ແລະ ກາກະບາດໂດຍໃຊ້ສໍສີ ຄແຣຢັນ
- ☐ ໃຊ້ເຄື່ອງຫລິ້ນ ແລະ ວັດທຸຕ່າງໆເພື່ອຫລິ້ນແບບຕັ້ງແກ້ງ
- ☐ ມ່ວນຊື່ນກັບປຶ້ມມີຮູບ ແລະ ເລີ່ມອ່ານ
- ☐ ເຂົ້າໃຈຄຳທີ່ບອກສິ່ງຂອງຢູ່ໃສ (ທາງຫລັງ, ລຸ່ມ, ຢູ່ໃນ, ເທິງ)
- ☐ ໃຊ້ຄຳເວົ້າທີ່ງ່າຍເຂົ້າໃຈ
- ☐ ຖາມຄຳຖາມຫລາຍໆເທື່ອ ເປັນຫຍັງ ແລະ ແມ່ນຫຍັງ
- ☐ ມັກຫລິ້ນມ່ວນກັບເດັກອື່ນໆ
- ☐ ບາງເທື່ອກໍຖ້າທີຂອງລາວ
- ☐ ຕອບຄຳຖາມງ່າຍ ຢູ່ໃສ ແລະ ແມ່ນໃຜ

### 4 ຫາ 5 ປີ ລູກຂອງທ່ານ...

- ☐ ເລີ້ນເຂົ້າກິ້ງໄປມາ ຫລື ຫລິ້ນທີ່ໃຊ້ກ້າມເນື້ອບ່ອນໃຫຍ່ (ຄືກັບຂາ)
- ☐ ໂດດໄປມາຕີນດຽວ
- ☐ ແຕ້ມໜ້າຕາທີ່ຄືກັບໜ້າ
- ☐ ນຸ່ງເຄື່ອງໃຫ້ຊ່ວຍເລັກນ້ອຍ
- ☐ ຖາມຄຳຖາມໃຊ້ຄຳວ່າ ແມ່ນຫຍັງ, ຢູ່ໃສ, ແມ່ນໃຜ ແລະ ເປັນຫຍັງ
- ☐ ສ່ວນຫລາຍເວົ້າສຽງໄວແຈ່ມແຈ້ງ ເວັ້ນແຕ່ສຽງ ໂຕ "S, Z, th, ແລະ r"
- ☐ ໃຊ້ຄຳທີ່ບອກຂະນາດ ແລະ ໂຕເລກ (ໃຫຍ່, ຫລາຍ)
- ☐ ເວົ້າທັງສອງຢ່າງຊື່ ແລະ ນາມສະກຸນຂອງລາວ
- ☐ ມັກຫລິ້ນກັບເດັກທີ່ມີອາຍຸດຽວກັນ

### 5 ຫາ 6 ປີ ລູກຂອງທ່ານ...

- ☐ ມັກຈັບເອົາ, ໂຍນ, ເຕະບານ
- ☐ ມີຄວາມທ່ຽງຕົງດີເວລາຫລິ້ນກິລາຍົກກ້າມ (ຂີ້ນເຊືອກ, ລີ້ນ, ເບຊະບອນ)
- ☐ ມັກຕັດຫລີ້ນກັບມີດຕັດ
- ☐ ນຸ່ງເຄື່ອງຕິດດຸມ, ຕິດແຕບ ແລະ ປິດຊິບດ້ວຍຕົນເອງ
- ☐ ບອກໃຫ້ຮູ້ວ່າມັກຂຽນຄຳເວົ້າ
- ☐ ເວົ້າຄືກັນກັບຄອບຄົວເວົ້າລົມກັນ (ໃຊ້ຄຳເວົ້າແລະ ປໂຍກຄືກັນ)
- ☐ ເຮັດຕາມການແນະນຳສາມຂັ້ນໃນການເອົາໃຫ້ (ເອົາໝາກບານ, ເ ອົາໄປໄວ້ຫີບເຄື່ອງຫລິ້ນ ແລະ ກັບມາຫາໂຕະ)
- ☐ ເວົ້າຊື່ເຕັມ, ອາຍຸ ແລະ ເພດຂອງລາວ
- ☐ ມັກຫລິ້ນເກມທີ່ຈັດໃຫ້ກັບເດັກຄົນອື່ນ (ຊາຍນອນເວົ້າ, ເຄື່ອງໝາຍ)

**ກະຣຸນາ ຖາມ**

**ທາຣົກ ຖ້າບໍ່ໄດ້**